 

## ພິທີຮ່ວມຊີວິດການເມືອງຂອງໜ່ວຍພັກກົມອາຊີວະສຶກສາ

ໃນວັນທີ 09/06/2011, ເວລາ 15:00 ໂມງ ໜ່ວຍພັກກົມອາຊີວະສຶກສາ ໄດ້ດຳເນີນຊີວິດການເມືອງ ຢູ່ທີ່ຫ້ອງ 130 ກົມອາຊີວະສຶກສາ, ໂດຍການເປັນປະທານຂອງ ສະຫາຍ ພູວຽງ ພູມີໄລ ຮັກສາການເລຂາໜ່ວຍພັກກົມອາຊີວະສຶກສາ, ສະຫາຍຄະນະໜ່ວຍພັກ ຫ້ອງການກະຊວງສຶກສາທິການ ແລະ ການເຂົ້າຮ່ວມຂອງຕາງໜ້າຄະນະໜ່ວຍພັກ ກົມຈັດຕັ້ງ ແລະ ພະນັກງານ, ຕາງໜ້າຄະນະໜ່ວຍພັກ ກົມການສຶກສາຊັ້ນສູງ ໂດຍມີຄະນະໜ່ວຍພັກກົມ, ສະມາຊິກພັກ ແລະ ຕາງໜ້າອົງການຈັດຕັ້ງມາຫາຊົນຂອງກົມອາຊີວະສຶກສາທັງໝົດ 19 ທ່ານ. ຈຸດປະສົງຂອງການດຳເນີນຊີວິດການເມືອງໃນຄັ້ງນີ້ ແນໃສ່ ເລື່ອນສະມາຊິກພັກສຳຮອງ ຂຶ້ນເປັນສະມາຊິກພັກສົມບູນ ຈຳນວນ 01 ສະຫາຍ ແລະ ຮັບເອົາມະຫາຊົນຜູ້ກ້າວໜ້າເຂົ້າເປັນ ສະມາຊິກພັກສຳຮອງ ຈຳນວນ 03 ສະຫາຍ ປະຈຳສົກສຶກສາ 2010-2011.

ພາຍຫລັງທີ່ໄດ້ອ່ານຜ່ານຂໍ້ຕົກລົງຂອງ 04 ສະຫາຍແລ້ວ, ສະຫາຍ ພູວຽງ ພູມີໄລ ຮັກສາການເລຂາໜ່ວຍພັກກົມອາຊີວະສຶກສາ ກໍ່ໄດ້ໃຫ້ຄຳໂອວາດແກ່ສະຫາຍສະມາຊິກໃໝ່ ໂດຍສະຫາຍໄດ້ເນັ້ນໃສ່ບາງເນື້ອໃນອັນສຳຄັນຂອງກົດລະບຽບພັກ(ສະບັບໃໝ່ ປີ 2011) ແລະ ສະເໜີສະມາຊິກພັກ ທັງໝົດ ມີຄວາມສະມາຄີກັນຢ່າງແໜ້ນແຟ້ນ ພ້ອມກັນປະຕິບັດ 04 ບຸກທະລຸຂອງພັກ ໃຫ້ປະກົດຜົນເປັນຈິງ.